CARE International in Lao PDR, Nongsangthor Road, Ban Nongsangthor,
Saysettha District, Vientiane Capital Lao PDR, P.O Box: 4328,
Tel: (856-21) 217 727, 212 991, Fax: (856-21) 217 727, E-mail: Lao.info@care.org

ໜັງສືເຊີນປະມູນລາຄາ

ເລື່ອງ: ຂໍເຊີນປະມູນລາຄາ ສຳລັບສັນຍາກອບໄລຍະຍາວ (12 ເດືອນ) ໃນການຜະລິດຕະພັນໂຄສະນາ

ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ໄດ້ດຳເນີນວຽກງານຢູ່ ສປປ ລາວ ມາຕັ້ງແຕ່ປີ 1992 ໂດຍມຸ່ງໝັ້ນໃນການຫຼຸດຜ່ອນຄວາມທຸກຍາກ ແລະ ການສົ່ງເສີມການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ. ອີງຕາມນະໂຍບາຍການຈັດຊື້-ຈັດຈ້າງຂອງອົງການ, ອົງການແຄຣ໌ ປະຈຳ ສປປ ລາວ ຂໍເຊີນບັນດາຜູ້ສະໜອງທີ່ມີເງື່ອນໄຂຄົບຖ້ວນ ຮ່ວມປະມູນລາຄາ ສຳລັບສັນຍາໄລຍະຍາວ (12 ເດືອນ) ເພື່ອຜະລິດຜະລິດຕະພັນໂຄສະນາ ປະເພດຕ່າງໆ ເຊັ່ນ: ເສື້ອຢືດຄໍມົນ, ເສື້ອໂປໂລ, ປຶ້ມບັນທຶກ, ບິກ, ເສື້ອກັນໜາວ/ເສື້ອກັກ, ຄັນຮົ່ມ, ຈອກນ້ຳ ແລະ ຖົງຜ້າ ເພື່ອນຳໃຊ້ເຂົ້າໃນບັນດາໂຄງການຂອງອົງການແຄຣ໌. ຜູ້ສະໜອງທີ່ສົນໃຈ ສາມາດເບິ່ງລາຍລະອຽດເພີ່ມເຕີມໄດ້ດັ່ງລຸ່ມນີ້:

ເອກະສານຍື່ນປະກອບເຂົ້າໃນການປະມູນ:

- **ປະຫວັດຄວາມເປັນມາຂອງບໍລິສັດ (Company Profile):** ຊື່ເຕັມ, ທີ່ຢູ່ ແລະ ຂໍ້ມູນການຕິດຕໍ່.
- **ເອກະສານທາງກົດໝາຍ:** ສຳເນົາໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນ ທີ່ຍັງມີຜົນບັງຄັບໃຊ້.
- **ໃບສະເໜີລາຄາລະອຽດ:** ຕ້ອງລະບຸລາຄາຕໍ່ໜ່ວຍ, ເງື່ອນໄຂການຈັດສົ່ງ, ເງື່ອນໄຂການຊຳລະເງິນ ແລະ ລາຍລະອຽດສະເພາະຂອງຍີ່ຫໍ້ສິນຄ້າ.
- **ແບບສອບຖາມຂໍ້ມູນຜູ້ສະໜອງ (Vendor Questionnaire):** ແບບຟອມທີ່ປະກອບຂໍ້ມູນຄົບຖ້ວນ (ສາມາດຂໍຮັບແບບຟອມໄດ້ຕາມການຮ້ອງຂໍ).

ລາຍການສິນຄ້າທີ່ຈະຜະລິດຕະຫຼອດໄລຍະເວລາຂອງສັນຍາ:

- ເສື້ອຢືດຄໍມົນ ພ້ອມພິມລາຍຕາມແບບທີ່ກຳນົດ ໂດຍໃຊ້ຊະນິດຜ້າ ແລະ ສີຕາມທີ່ຕ້ອງການ
- ເສື້ອໂປໂລ ພ້ອມພິມ/ປັກລາຍຕາມແບບທີ່ກຳນົດ ໂດຍໃຊ້ຊະນິດຜ້າ ແລະ ສີຕາມທີ່ຕ້ອງການ
- ຄັນຮົ່ມ ພ້ອມພິມຕາມແບບທີ່ກຳນົດໃຫ້
- ຖຸງນ້ຳ
- ໝວກແກັບ / ໝວກ
- ປ້າຍໂຄສະນາແບບມ້ວນຕັ້ງພື້ນ (Roll-up banner)
- ຖົງຜ້າ
- ປຶ້ມບັນທຶກ
- ເອກະສານຂໍ້ມູນ (Factsheet) ຫຼື ແຜ່ນພັບໂຄສະນາ (Brochure)
- ເສື້ອກັນໜາວ / ເສື້ອກັກຊ່າງພາບ
- ບິກ
- ເຂັມຂັດຕິດເສື້ອ (Brooch)

ໝາຍເຫດ:

- ວັດສະດຸທີ່ນຳໃຊ້ໃນການຜະລິດຂ້າງເທິງນີ້ ຕ້ອງມີຄຸນນະພາບດີ ແລະ ມີມາດຕະຖານສູງ.

CARE International in Lao PDR, Nongsangthor Road, Ban Nongsangthor,
Saysettha District, Vientiane Capital Lao PDR, P.O Box: 4328,
Tel: (856-21) 217 727, 212 991, Fax: (856-21) 217 727, E-mail: Lao.info@care.org

- ເຄື່ອງທີ່ຜະລິດຕ້ອງຖືກກັບລະບຽບການອອກແບບ ແລະ ການໝາຍຂອງອົງການແຄຣ໌ (CARE Branding Policy).

ວິທີການສະໜັກ: ກະລຸນາສົ່ງໜັງສືສະແດງຄວາມສົນໃຈ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງທັງໝົດ ແລະ ໃບສະເໜີລາຄາ ມາຍັງອີເມວ: **Lao.Contract@care.org** ບໍ່ໃຫ້ການວັນທີ 23 ພະຈິກ 2026.

ສອບຖາມຂໍ້ມູນເພີ່ມເຕີມ ໄດ້ທີ່ເບີໂທ: 021 217727 ຫຼື WhatsApp: 020 95670639.

ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ຂໍສະຫງວນສິດໃນການແຈ້ງຜົນການປະມູນ ໂດຍຈະຕິດຕໍ່ກັບຫາສະເພາະຜູ້ສະໜອງທີ່ຊະນະການປະມູນເທົ່ານັ້ນ ແລະ ເອກະສານທັງໝົດທີ່ໄດ້ຍື່ນມາແລ້ວນັ້ນ ຈະບໍ່ຖືກສົ່ງຄືນພາຍຫຼັງການຄັດເລືອກຂອງຄະນະກຳມະການ.

ດ້ວຍຄວາມນັບຖືຢ່າງສູງ,

ຄະນະກຳມະການຈັດຊື້-ຈັດຈ້າງ

ວັນທີ: 17 ພະຈິກ 2026